

# ຂັ້ນຕອນໂດຍຫຍໍ້ ໃນການຈັດຕັ້ງປະຕິບັດ ການວາງແຜນຄຸ້ມຄອງນຳໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ
# Participatory Land Use Planning (PLUP 2.0)

## I. ພາກສະເໜີ

PLUP 2.0 ແມ່ນບົດແນະນຳດ້ານວິຊາການ ທີ່ໄດ້ຖືກຮຽບຮຽງຂຶ້ນໂດຍອີງໃສ່ຫຼັກການພື້ນຖານ, ບາດກ້າວ ແລະ ຂັ້ນຕອນ ທີ່ຖອດຖອນໄດ້ຈາກບັນດາຄູ່ມື PLUP ຕ່າງໆທີ່ມີຢູ່ແລ້ວ. ບົດແນະນຳດ້ານວິຊາການສະບັບນີ້ ບໍ່ໄດ້ແມ່ນຄູ່ມືທີ່ສ້າງຂຶ້ນໃໝ່ ເພື່ອນຳໃຊ້ໃນຂອບເຂດທົ່ວປະເທດ ແລະ ບໍ່ໄດ້ແມ່ນເອກະສານທາງການ ທີ່ມີຜົນບັງຄັບໃຊ້ໂດຍທົ່ວໄປ. PLUP 2.0 ພຽງແຕ່ເປັນເອກະສານດ້ານວິຊາການ ສຳລັບການຈັດຕັ້ງປະຕິບັດວຽກພາຍໃນຂອງໂຄງການເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ຖ້າຫາກບັນດາອົງການຈັດຕັ້ງ ແລະ ພາກສ່ວນຕ່າງໆ ທີ່ມີຄວາມສົນໃຈໃນການນຳໃຊ້ແນວທາງປະຕິບັດນີ້ ກໍ່ສາມາດນຳເອົາໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດຢູ່ພື້ນທີ່ເປົ້າໝາຍ ຂອງຕົນເອງໄດ້.

ແຜ່ນພັບສະບັບນີ້ ຈະຊ່ວຍອຳນວຍຄວາມສະດວກໃຫ້ຜູ້ຈັດຕັ້ງປະຕິບັດ ເພື່ອນຳໃຊ້ເປັນເຄື່ອງມື ແລະ ບ່ອນອີງ ໃນການຈັດຕັ້ງປະຕິບັດວຽກງານ PLUP 2.0 ຢູ່ພາກສະໜາມໄດ້ຢ່າງຄ່ອງແຄ້ວ. ເຊິ່ງສະດວກໃນການພົກພາລົງສະໜາມ ແລະ ຍັງໃຫ້ຄຳອະທິບາຍກ່ຽວກັບວິທີການຈັດຕັ້ງປະຕິບັດ ໃຫ້ໄປຕາມແຕ່ລະບາດກ້າວ, ຂັ້ນຕອນ ລວມເຖິງໃຫ້ຄຳແນະນຳໃນການນຳໃຊ້ແບບຟອມຕ່າງໆ ໃຫ້ຖືກຕ້ອງຄົບຖ້ວນ ແລະ ມີສອດຄ່ອງກັບລະບຽບຫຼັກການ ແລະ ສະພາບເງື່ອນໄຂຕົວຈິງຂອງບ້ານ.

## II. ຈຸດປະສົງຂອງວຽກງານ PLUP 2.0

- ເພື່ອສຶກສາ ແລະ ທຳຄວາມເຂົ້າໃຈສະພາບການນຳໃຊ້ທີ່ດິນປະເພດຕ່າງໆ ພາຍໃນບ້ານ ແລະ ສ້າງແຜນທີ່ຈັດສັນ ຄຸ້ມຄອງ ນຳໃຊ້ທີ່ດິນປະເພດຕ່າງໆ ຂອງບ້ານໃນອະນາຄົດ ຮ່ວມກັນຊາວບ້ານ;
- ເສີມສ້າງຄວາມໝັ້ນຄົງໃນການຄອບຄອງ ແລະ ນຳໃຊ້ທີ່ດິນ ໃຫ້ແກ່ຊຸມຊົນ;
- ສົ່ງເສີມ ການຜະລິດກະສິກຳທີ່ມີຄວາມຫຼາກຫຼາຍ ແລະ ຍືນຍົງ ໄປຄຽງຄູ່ກັບການຄຸ້ມຄອງປ່າໄມ້;
- ສະໜອງຂໍ້ມູນພື້ນຖານ ໃຫ້ແກ່ວຽກງານ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ (VFMP), ການສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ແລະ ວຽກງານຂຶ້ນທະບຽນທີ່ດິນ-ອອກໃບຕາດິນ ຢ່າງເປັນລະບົບໃນອະນາຄົດ.

## III. ບາດກ້າວ ແລະ ຂັ້ນຕອນ

ວິທີການ PLUP 2.0 ປະກອບມີ 9 ບາດກ້າວ ດັ່ງນີ້:



- **ທີມງານຂັ້ນເມືອງ:** ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ແມ່ນພາກສ່ວນຫຼັກທີ່ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດກິດຈະກຳຢູ່ພາກສະໜາມ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນເມືອງ. ທີມງານວິຊາການຄວນປະກອບມີຢ່າງໜ້ອຍ 4 - 6 ທ່ານ ທີ່ຜ່ານການຝຶກອົບຮົມວຽກງານ PLUP 2.0 ມາແລ້ວ (ຢ່າງໜ້ອຍຕ້ອງປະກອບມີຜູ້ສາມາດນຳໃຊ້ໂປຼແກຼມ Q GIS ໄດ້ຢ່າງຄ່ອງແຄ້ວ 1-2 ທ່ານ);
- ກ່ອນລົງສະໜາມ ທີມງານຈະຕ້ອງໄດ້ຂຶ້ນແຜນວຽກ ແລະ ງົບປະມານ ໃຫ້ລະອຽດ ແລະ ສົ່ງແຈ້ງການ ຫຼື ນັດໝາຍບ້ານ (ຢ່າງນ້ອຍ 3 ວັນລ່ວງໜ້າ);
- ປະຊຸມທີມງານ ແລະ ແບ່ງໜ້າວຽກຢູ່ພາກຫ້ອງການ;
- ທົບທວນ ແລະ ວິເຄາະຂໍ້ມູນການວາງແຜນນຳໃຊ້ທີ່ດິນຂອງບ້ານທີ່ເຮັດສຳເລັດໃນໄລຍະຜ່ານມາ (ຖ້າມີ) ;
- ກະກຽມແບບຟອມເກັບກຳຂໍ້ມູນຕາມບົດແນະນຳ PLUP 2.0 **(ນຳໃຊ້ຟອມ PLUP F00 ຫາ F11 ແລະ PLUP T01 ຫາ T11)**;
- ດາວໂຫຼດພາບຖ່າຍດາວທຽມ/ພາບຖ່າຍທາງອາກາດ ທີ່ມີຄວາມລະອຽດສູງ (ທີ່ອັບເດດ), ນຳໃຊ້ມາດຕາສ່ວນ 1:5,000 ຫາ 1:15,000 (ອີງຕາມພື້ນທີ່ບ້ານ) ;
- ກະກຽມເຄື່ອງມື ແລະ ອຸປະກອນທີ່ຈຳເປັນ ສຳລັບພາກສະໜາມ **(ນຳໃຊ້ຟອມ PLUP F0.1)** ;
- **ໄລຍະເວລາ:** ການຈັດຕັ້ງປະຕິບັດວຽກ PLUP 2.0 ຢູ່ພາກສະໜາມ ແມ່ນປະມານ 7-8 ວັນ (ຂຶ້ນກັບຂະໜາດຂອງບ້ານ ແລະ ສະພາບຕົວຈິງຂອງບ້ານ), ບາງບ້ານອາດໄດ້ໄປຫຼາຍກວ່າໜຶ່ງຄັ້ງ ຖ້າມີຂໍ້ຂັດແຍ້ງດ້ານທີ່ດິນ ທີ່ແກ້ໄຂບໍ່ໄດ້ໃນຮອບດຽວ.

**ການກະກຽມ**



**ຈັດກອງປະຊຸມຄັ້ງທຳອິດຢູ່ຂັ້ນບ້ານ (ມື້ທີ 1)**

- ປະຊາຊົນທັງໝົດ ທັງຍິງ ແລະ ຊາຍ, ຊົນເຜົ່າຕ່າງໆ ພາຍໃນບ້ານ ຄວນຖືກເຊີນເຂົ້າຮ່ວມປະຊຸມຢ່າງເປັນເອກະພາບກັນ;
- ການເປີດກອງປະຊຸມຄັ້ງທຳອິດ ຢູ່ຂັ້ນບ້ານ ຄວນໃຊ້ເວລາປະມານ 2-3 ຊົ່ວໂມງ;
- ນຳສະເໜີ ຈຸດປະສົງ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດ PLUP 2.0;
- ສະຫະພັນແມ່ຍິງເມືອງ ຄວນຖືກເຊີນເຂົ້າຮ່ວມ ເພື່ອໃຫ້ຄວາມຮູ້ ກ່ຽວກັບວຽກງານບົດບາດຍິງຊາຍ ທີ່ຕິດພັນກັບການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມຂອງບ້ານ;
- ຄັດເລືອກ ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂອງບ້ານ (VLFMC) ພ້ອມທັງໃຫ້ຄວາມຮູ້ກ່ຽວກັບ ພາລະບົດບາດຂອງຄະນະ ທີ່ຖືກຄັດເລືອກ **(ນຳໃຊ້ຟອມ PLUP T01 ຫາ 03)**. ສະມາຊິກ VLFMC ຄວນປະກອບມີແມ່ຍິງຢ່າງໜ້ອຍ 30% ແລະ ຈຳນວນສະມາຊິກຄວນເປັນຕົວເລກຄີກ ເພື່ອຕັດສິນງ່າຍ ເວລາລົງຄະແນນສຽງເຫັນດີ;
- ເກັບກຳຂໍ້ມູນທົ່ວໄປຂອງບ້ານ **(ນຳໃຊ້ຟອມ PLUP F01)**;
- ໃນກໍລະນີ PLUP ໄດ້ຖືກປະຕິບັດ ຢູ່ໃນບ້ານໃນໄລຍະຜ່ານມາ **(ນຳໃຊ້ຟອມ PLUP F05).**



**ການເກັບກຳຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ທີ່ດິນ ແລະ ປ່າໄມ້ (ມື້ທີ 2-3)**

- ທີມງານ PLUP ແຍກເປັນ 2 ກຸ່ມຍ່ອຍ ເຊັ່ນດຽວກັນກັບ ຄະນະ VLFMC ເພື່ອເກັບກຳຂໍ້ມູນ 2 ກຸ່ມໄປຄຽງຄູ່ກັນ;
- ຜູ້ອຳນວຍຄວາມສະດວກ ແຕ່ລະກຸ່ມ ບໍ່ຄວນແມ່ນຄົນດຽວກັນ (ຄວນແຍກກັນລະຫວ່າງ ຜູ້ຖາມ ແລະ ຜູ້ບັນທຶກ);
- ແບ່ງເປັນກຸ່ມ (ກຸ່ມຍິງ-ຊາຍ ແລະ ຊົນເຜົ່າ) ເພື່ອເກັບກຳຂໍ້ມູນ ສຳມະໂນບັນຫາ ແລະ ການຂະຫຍາຍຕົວຂອງປະຊາກອນ **(ນຳໃຊ້ຟອມ PLUP F02 ຫາ F03);**
- ຜູ້ເຂົ້າຮ່ວມແຕ່ລະກຸ່ມ ຄວນປະກອບມີ ບາງສ່ວນຂອງສະມາຊິກຄະນະ VLFMC, ເຖົ້າແກ່ແນວໂຮມ ແລະ ປະຊາຊົນທົ່ວໄປ ທີ່ຮູ້ຈັກສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານດີ;
- ຫຼັງຈາກສຳເລັດການເກັບຂໍ້ມູນຈາກກຸ່ມສົນທະນາ ທີມງານ PLUP ຕ້ອງໄດ້ທົບທວນຄືນ ແລະ ປຽບທຽບຂໍ້ມູນໂຕເລກ ທີ່ເກັບກຳໄດ້. ກວດຄືນຄວາມຖືກຕ້ອງ, ວິເຄາະ ແລະ ສັງລວມຂໍ້ມູນ ພິມໃສ່ຮ່າງແບບຟອມ ລົງຄອມພິວເຕີ;
- ຖ້າຂໍ້ມູນຜົນໄດ້ຮັບຈາກທັງສອງ ຫຼື ຫຼາຍກຸ່ມ ມີຄວາມແຕກຕ່າງກັນຫຼາຍ, ຕ້ອງໄດ້ນຳຂໍ້ມູນມາຖືກປຶກສາຫາລື ແລະ ຢືນຢັນກັບ ສະມາຊິກຂອງຄະນະ VLFMC ຄືນອີກເທື່ອໜຶ່ງ.



**ການສ້າງແຜນທີ່ການນຳໃຊ້ທີ່ດິນປະຈຸບັນ (CLUFC) (ມື້ທີ 4)**

- ທີມງານ PLUP ຮ່ວມກັບຄະນະ VLFMC ແລະ ປະຊາຊົນທີ່ມີຄວາມສົນໃຈ ຫຼື ຮູ້ສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານດີ ເຂົ້າຮ່ວມ ເຊັ່ນ: ເລຂາພັກບ້ານ, ເຖົ້າແກ່ແນວໂຮມ, ເຈົ້າກົກ ເຈົ້າເຫຼົ່າ...
- ທີມງານສາມາດແຕ້ມໂດຍກົງໃສ່ແຜນທີ່ໃນໂປແກຼມ QGIS ໂດຍນຳໃຊ້ LCD ສາຍ ຫຼື ແຕ້ມໃສ່ແຜ່ນທີ່ພາບຖ່າຍດາວທຽມທີ່ພິມໄປ ແລ້ວຈຶ່ງມາແຕ້ມໃນໂປແກຼມ ກໍ່ໄດ້ (ໂດຍເລືອກເອົາວິທີການ ທີ່ປະຊາຊົນເຂົ້າໃຈດີ);
- ແຕ້ມຈຸດສຳຄັນຕ່າງໆ ເຊັ່ນ: ສາຍນໍ້າ, ສາຍຫ້ວຍ, ເສັ້ນທາງ, ຈອມພູ ແລະ ຈຸດທີ່ແຫຼ່ງອື່ນໆ ທີ່ເປັນທີ່ຮູ້ຈັກດີຂອງປະຊາຊົນບ້ານນີ້ ແລະ ບ້ານອ້ອມຂ້າງ;
- **ເລີ່ມແຕ້ມຂອບເຂດຄຸ້ມຄອງຂອງບ້ານ (BND):** ໂດຍເຊີນຕ່າງໜ້າບ້ານອ້ອມຂ້າງທີ່ຕິດຈອດ ມາເຂົ້າຮ່ວມ, ພ້ອມທັງຍ່າງສຳຫຼວດ (ຈັບຈຸດພິກັດ GPS ສຳລັບຈຸດສຳຄັນ ແລະ ພື້ນທີ່ ທີ່ບໍ່ຊັດເຈນ) **(ນຳໃຊ້ຟອມ PLUP F04)** ແລະ ສຸດທ້າຍເຊັນບົດບັນທຶກເຂດຄຸ້ມຄອງລະຫວ່າງບ້ານ **(ນຳໃຊ້ຟອມ PLUP T04)**;
- **ແຕ້ມແຜ່ນທີ່ການນຳໃຊ້ທີ່ດິນໃນປະຈຸບັນ (CLUFC):** ແຕ້ມຕາມການນຳໃຊ້ຕົວຈິງຂອງບ້ານ ໂດຍເລີ່ມຈາກ: ດິນປ່າໄມ້, ດິນກະສິກຳ, ດິນບໍລິເວນນໍ້າ, ດິນຄົມມະນາຄົມຂົນສົ່ງ, ດິນອຸດສາຫະກຳ, ດິນວັດທະນະທຳ, ດິນ ປກສ-ປກຊ ແລະ ດິນປຸກສ້າງ **(ພ້ອມທັງໃສ່ຊື່ຟາຍ ແລະ ລະຫັດສີປະເພດການນຳໃຊ້ທີ່ດິນ ຕາມມາດຕະຖານ 17.3);**
- ຄວນບັນທຶກຂໍ້ມູນລະອຽດກ່ຽວກັບ ລະບົບການຖືຄອງທີ່ດິນພາຍໃນບ້ານ ເປັນຕົ້ນແມ່ນ ຄອບຄອງແບບເປັນລາຍຄອບຄົວຕ່າງໆ ແລະ ດິນເຂດໃດທີ່ເປັນຂອງລວມໝູ່ ຫຼື ເປັນດິນຂອງລັດ;
- ຂໍ້ມູນທັງໝົດກ່ຽວກັບເນື້ອທີ່ ໃນແຜນທີ່ CLUFC ຈະຕ້ອງໄດ້ຖືກປຽບທຽບກັບຂໍ້ມູນທີ່ໄດ້ຈາກການສຳພາດເປັນກຸ່ມ ທີ່ເກັບໄດ້ຈາກແບບຟອມຕ່າງໆ ເພື່ອຢັ້ງຢືນຄວາມຖືອກຕ້ອງ ແລະ ຄວາມຊັດເຈນ;
- ບາງຄັ້ງປະຊາຊົນ ອາດຈະໝາຍຂອບເຂດຕອນດິນຂະໜາດໃຫຍ່ ສຳລັບການກະສິກຳເຂດເນີນສູງ ແລະ ການປຸກພືດແບບໝູນວຽນ. ທີມງານ PLUP **ບໍ່ຄວນໄປລົງເລິກຢູ່ໃນຂັ້ນຕອນນີ້ເທື່ອ** ຫຼື ພະຍາຍາມເພື່ອຫຼຸດຂະໜາດເນື້ອທີ່ຢູ່ໃນແຜນທີ່. ເນື່ອງຈາກວ່າຂັ້ນຕອນດັ່ງກ່າວນີ້ແມ່ນເພື່ອຢາກຮູ້ສະພາບການນຳໃຊ້ທີ່ດິນຕົວຈິງຂອງບ້ານ.



**ການສ້າງແຜນຈັດສັນ ຄຸ້ມຄອງນຳໃຊ້ທີ່ດິນ ໃນອະນາຄົດ (FLUMZ) (ມື້ທີ 5)**

- ທີມງານ PLUP ຄວນອະທິບາຍໃຫ້ປະຊາຊົນເຂົ້າໃຈ ແລະ ຮັບປະກັນວ່າ ຂະບວນການສ້າງແຜນຈັດສັນນີ້ **ແມ່ນບໍ່ມີລັກສະນະບັງຄັບ;**
- ເພື່ອການພັດທະນາ ທາງເລືອກ ແລະ ການຕັດສິນໃຈແບບມີສ່ວນຮ່ວມ ແມ່ນເປີດໂອກາດໃຫ້ປະຊາຊົນ ໄດ້ກຳນົດຄວາມຕ້ອງການ ແລະ ຈັດບຸລິມະສິດຂອງການປັບປຸງຊີວິດການເປັນຢູ່ໃຫ້ເໝາະສົມທີ່ສຸດ. ທີມງານ PLUP ພຽງແຕ່ອຳນວຍຄວາມສະດວກໃນການສ້າງແຜນ ແລະ ໃຫ້ຄຳແນະນຳດ້ານວິຊາການ (ຖ້າເຫັນວ່າທາງເລືອກຂອງປະຊາຊົນບໍ່ເໝາະສົມ);
- ກ່ອນລິເລີ່ມ ສ້າງແຜນທີ່ຈັດສັນ, ທີມງານ PLUP ຕ້ອງມີແຜນທີ່ພື້ນຖານ, ແຜນທີ່ CLUFC ແລະ ຜົນໄດ້ຮັບຈາກການເກັບກຳ ຂໍ້ມູນເສດຖະກິດ-ສັງຄົມ ທີ່ໄດ້ກະກຽມໄວ້;
- ແຜນຈັດສັນຄວນອີງໃສ່ ການນຳໃຊ້ທີ່ດິນປະຈຸບັນເປັນຕົ້ນຕໍ, ການປ່ຽນແປງ ແລະ ການປັບປຸງຕ່າງໆທີ່ເຫັນວ່າຈຳເປັນ ແມ່ນຕ້ອງມີເຫດຜົນສາມາດອະທິບາຍໄດ້ (ໂດຍອີງຕາມປັດໃຈ ທີ່ຄວນພິຈາລະນາໃນການກຳນົດແຜນ FLUMZ);
- ຖ້າມີຂໍ້ມູນ ຄວນສົມທຽບພາບຖ່າຍດາວທຽມ ປະມານ 5 ຫາ 10 ປີ ຄືນຫຼັງ ເພື່ອສຶກສາສະພາບການປ່ຽນແປງການນຳໃຊ້ທີ່ດິນທີ່ຜ່ານມາໂດຍສະເພາະ ແມ່ນການຜະລິດກະສິກຳເຂດເນີນສູງ;
- ຖ້າເປັນໄປໄດ້ ພື້ນທີ່ ທີ່ເປັນປ່າໄມ້ໃນ CLUFC ຄວນຖືກກຳນົດເປັນເຂດປ່າໄມ້ໃນແຜນຈັດສັນ FLUMZ. ເພື່ອຫຼີກລ້ຽງການຫັນປ່ຽນເຂດປ່າດົງຕຶບໜາ ໄປເປັນປະເພດທີ່ດິນອື່ນໆ ທີ່ບໍ່ຖືກຕ້ອງ;
- **ແຕ້ມແຜ່ນທີ່ຈັດສັນ ຄຸ້ມຄອງນຳໃຊ້ທີ່ດິນ ໃນອະນາຄົດ (FLUMZ)** ໂດຍພິຈາລະນາເງື່ອນໄຂຕ່າງໆ ຂ້າງເທິງ ເລີ່ມແຕ້ມຈາກ: ດິນປຸກສ້າງ, ດິນກະສິກຳ (ກະສິກຳຄົງທີ່ ແລະ ກະສິກຳເນີນສູງ), ດິນປ່າໄມ້, ດິນບໍລິເວນນ້ຳ, ດິນຄົມມະນາຄົມຂົນສົ່ງ, ດິນອຸດສາຫະກຳ, ດິນວັດທະນະທຳ, ດິນ ປກສ-ປກຊ **ພ້ອມທັງໃສ່ຊື່ຟາຍ ແລະ ລະຫັດສີ ຕາມມາດຕະຖານ 17.3;**
- ກວດ ແລະ ປັບປຸງຄືນຜົນໄດ້ຮັບ ແຜນທີ່ FLUMZ ເພື່ອໃຫ້ເໝາະສົມກັບຄວາມເປັນຈິງ ໂດຍຮັບປະກັນວ່າປະຊາຊົນ, ລັດ, ພາກສ່ວນທີ່ກ່ຽວຂ້ອງ ສາມາດປະຕິບັດໄດ້;
- ແຜນການນຳໃຊ້ທີ່ດິນ ຈະໄດ້ຖືກຮັບຮອງ ເປັນເອກະສານທາງການ ແລະ ມີຜົນສັກສິດທາງດ້ານກົດໝາຍ ໃນຕໍ່ໜ້າ.



**ການສ້າງກົດລະບຽບຂອງບ້ານ (ມື້ທີ 6)**

- ທີມງານ PLUP ສາມາດນຳໃຊ້ຮ່າງກົດລະບຽບຂອງບ້ານ **(ຟອມ PLUP T05)** ເພື່ອປຶກສາຫາລື ແລະ ປັບປຸງເນື້ອໃນຂໍ້ກຳນົດໃນລະບຽບຂອງບ້ານ ຮ່ວມກັບຄະນະ VLFMC;
- ກຳນົດເງື່ອນໄຂສະເພາະ ແລະ ລະບຽບການ ສຳລັບແຕ່ລະເຂດການນຳໃຊ້ທີ່ດິນກະສິກຳ, ເຂດປ່າໄມ້ ແລະ ເຂດອື່ນໆ ທີ່ກຳນົດໄວ້ໃນ FLUMZ;
- **ບໍ່ຄວນນຳໃຊ້ຮ່າງກົດລະບຽບທີ່ເປັນມາດຕະຖານດຽວກັນ** ເນື່ອງຈາກວ່າ ສະພາບແຕ່ລະບ້ານ ແມ່ນມີຄວາມແຕກຕ່າງກັນ;
- ກົດລະບຽບຂອງບ້ານ ຈະຕ້ອງໃຫ້ມີຄວາມສອດຄ່ອງກັບກົດໝາຍ ແລະ ນະໂຍບາຍແຫ່ງຊາດ ແລະ ຕ້ອງເໝາະສົມກັບສະພາບຕົວຈິງຂອງແຕ່ລະບ້ານເປົ້າໝາຍ;
- ລະບຽບການຄຸ້ມຄອງ ດິນອຸດສາຫະກຳ ແລະ ດິນ ປກຊ-ປກສ ອາດບໍ່ຈຳເປັນຕ້ອງກຳນົດໃນລະບຽບຂອງບ້ານ ເພາະມັນນອກເໜືອຈາກຄວາມຮັບຜິດຊອບຂອງບ້ານ;
- ກົດລະບຽບຂອງບ້ານ ຕ້ອງໄດ້ຮັບການເຫັນດີ ຈາກປະຊາຊົນທັງໝົດ ແລະ **ໄດ້ຮັບການເຊັນຮັບຮອງຈາກ ການນຳຂັ້ນເມືອງ.**



**ກອງປະຊຸມປິດ, ການສ້າງເອກະສານ, ການອະນຸມັດ ແລະ ການເກັບມ້ຽນຂໍ້ມູນ (ມື້ທີ 7)**

- ກອງປະຊຸມປິດ ແມ່ນຈັດຢູ່ມື້ສຸດທ້າຍຂອງວຽກງານ PLUP ຢູ່ຂັ້ນບ້ານ, **ເຊີນເອົາປະຊາຊົນພາຍໃນບ້ານເຂົ້າຮ່ວມໃຫ້ທົ່ວເຖິງ** ເພື່ອຮັບຟັງ, ທົບທວນ ແລະ ສະເໜີການປັບປຸງ ຫຼື ຕົກລົງເຫັນດີ ຮັບຮອງເອົາຜົນໄດ້ຮັບ;
- ເນື້ອໃນຫຼັກ ທີ່ຕ້ອງໄດ້ນຳສະເໜີ ໃນກອງປະຊຸມປິດມີ: ຂໍ້ຕົກລົງຂອບເຂດຄຸ້ມຄອງຂອງບ້ານ (BND); CLUFC, FLUMZ ແລະ ຮ່າງກົດລະບຽບຂອງບ້ານ.
- **ຄະນະ VLFMC ສົມທົບກັບ ທີມງານ PLUP ຂັ້ນເມືອງ ຄວນເປັນຜູ້ນຳສະເໜີ** ຜົນໄດ້ຮັບເບື້ອງຕົ້ນ ຢູ່ຂັ້ນບ້ານ;
- ທີມງານ PLUP ຈຳເປັນຕ້ອງ **ອະທິບາຍໃຫ້ປະຊາຊົນ ຮັບຮູ້ ແລະ ເຂົ້າໃຈຢ່າງເປັນເອກະພາບກັນວ່າ** ຫຼັງຈາກແຜນຈັດສັນທີ່ດິນ ໄດ້ຖືກຮັບຮອງແລ້ວ **ແຜນດັ່ງກ່າວຈະກາຍເປັນຄຳໝັ້ນສັນຍາ ແລະ ແນວທາງໃນການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານ ໃນ 5-10 ປີຂ້າງໜ້າ**
- ການຕິດຕາມການຈັດຕັ້ງປະຕິບັດ ຕາມ FLUMZ ແລະ ລະບຽບຂອງບ້ານ ແມ່ນຄະນະ VLFMC ເປັນເຈົ້າການຫຼັກ;
- **ສຸດທ້າຍ,** ທີມງານ PLUP ຄວນບັນທຶກການເຂົ້າຮ່ວມ, ການຄັດຄ້ານ ແລະ ຄວາມເຫັນດີເຫັນພ້ອມ ຂອງປະຊາຊົນ ກ່ຽວກັບຜົນໄດ້ຮັບ PLUP 2.0 ວ່າ **ເຫັນດີ ຫຼື ບໍ່ເຫັນດີ? (ນຳໃຊ້ຟອມ PLUP F08: ຮ່າງບັນທຶກການຕົກລົງເຫັນດີຂອງປະຊາຊົນໃນຂະບວນການ PLUP 2.0);**
- ຫຼັງຈາກ ກັບຈາກວຽກພາກສະໜາມ ທີມງານ PLUP ຄວນສະຫຼຸບສັງລວມຂໍ້ມູນ ແລະ **ສ້າງບົດລາຍງານ PLUP 2.0 (ນຳໃຊ້ຟອມ PLUP T06)** ຢ່າງທັນທີ ເພື່ອຫຼີກລ້ຽງ ຂໍ້ມູນເສຍ ຫຼື ການຫຼົງລືມຕ່າງໆ;
- **ຫຼັງຈາກສຳເລັດ ປຶ້ມບົດລາຍງານສະບັບສົມບູນ ຈຶ່ງສະເໜີເພື່ອຂໍການຮັບຮອງເປັນທາງການ ຈາກອຳນາດການປົກຄອງຂອງເມືອງ (ເຈົ້າເມືອງ ຫຼື ຮອງເຈົ້າເມືອງ ເປັນຜູ້ຮັບຮອງ);**
- ເພື່ອ ຮັກສາບໍ່ໃຫ້ຂໍ້ມູນຕົກເຮ່ຍ ເສຍຫາຍ (ໂດຍສະເພາະ ຂໍ້ມູນ GIS, ແຜນທີ່, ຂໍ້ມູນເສດຖະກິດສັງຄົມ ແລະ ບົດລາຍງານ) ຫຼັງຈາກຂໍ້ມູນສົມບູນ ແລ້ວຄວນ:
  - ອັບໂຫຼດລົງ ລະບົບການນຳໃຊ້ທີ່ດິນ (LUIS)
  - ຈັດເກັບຂໍ້ມູນເປັນສອງຮູບແບບ: (1) ຮູບແບບຟາຍເອເລັກໂຕນິກ ໄວ້ໃນຄອມ, ຮາດດິດ, ຖານຂໍ້ມູນ.... ແລະ (2) ການເຮັດເປັນປຶ້ມແຈກຢາຍພາກສ່ວນທີ່ກ່ຽວຂ້ອງ (ລວມທັງບ້ານ).











## ການເຊື່ອມໂຍງເຂົ້າກັບກິດຈະກຳຂອງ PSAP ແລະ VFMP

- ເຖິງຜົນໄດ້ຮັບ ຈາກວຽກງານ PLUP ຈະດີປານໃດ ກໍ່ຕາມ, ຖ້າແຜນບໍ່ຖືກຈັດຕັ້ງປະຕິບັດ ກໍ່ຈະເຮັດໃຫ້ຂໍ້ມູນ PLUP ຖືກລືມ ແລະ ບໍ່ມີຄວາມໝາຍ;
- ໃນວຽກງານຂອງໂຄງການ I-GFLL/SU-I-GFLM ຂໍ້ມູນຕ່າງໆ ທີ່ໄດ້ຈາກ PLUP 2.0 ຈະເປັນຂໍ້ມູນພື້ນຖານໃຫ້ແກ່ ກິດຈະກຳຂອງໂຄງການ ທີ່ຈະຈັດຕັ້ງປະຕິບັດໃນພາຍຫຼັງ ເປັນຕົ້ນແມ່ນ (1) ການສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ແລະ (2) ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ (VFMP);
- ທີມງານ PSAP ແລະ VFMP ຈະໄດ້ນຳໃຊ້ແຜນທີ່ BND, CLUFC, FLUMZ, ຂໍ້ມູນເສດຖະກິດ-ສັງຄົມ ແລະ ກົດລະບຽບຂອງບ້ານ ເພື່ອເປັນຂໍ້ມູນພື້ນຖານ ໃນການສືບຕໍ່ລົງເລິກວຽກພັດທະນາຂອງປະເພດການນຳໃຊ້ທີ່ດິນຍ່ອຍ ຕໍ່ໄປ;
- **ໃນໄລຍະຍາວ ຂໍ້ມູນ PLUP ຍັງຈະຖືກນຳໃຊ້ເປັນຂໍ້ມູນພື້ນຖານ ໃຫ້ແກ່ວຽກງານ ຂຶ້ນທະບຽນອອກໃບຕາດິນ.**



## ການຕິດຕາມ ແລະ ປະເມີນຜົນ

- ປະມານ 2 ປີ ຫຼັງຈາກແຜນໄດ້ຖືກສ້າງຂຶ້ນ, ທີມງານ PLUP ຂັ້ນເມືອງ ຈະໄດ້ມີການປະເມີນຕິດຕາມກວດກາ ຮ່ວມກັບຄະນະ VLFMC ແລະ ປະຊາຊົນກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດຕາມ ແຜນຈັດສັນຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ ໂດຍສະເພາະແມ່ນຄວາມປົກຫຸ້ມປ່າໄມ້ **(ນຳໃຊ້ຟອມ PLUP F10).**

**ບ່ອນອ້າງອີງ**

ບົດແນະນຳ ການວາງແຜນຄຸ້ມຄອງນຳໃຊ້ທີ່ດິນແບບມີສ່ວນຮ່ວມຂັ້ນບ້ານ (PLUP 2.0), ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ຮ່ວມກັບ ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສະບັບ ເດືອນພະຈິກ 2020.

**ຕິດຕໍ່ພົວພັນ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ກະຊວງກະສິກຳ ແລະ ແວດລ້ອມ
ສະຖານທີ່ຕັ້ງ: ຖະໜົນ ຊຸນບູລົມ, ບ້ານທົ່ງຂັນຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.

**ສະໜັບສະໜູນໂດຍ**

ໂຄງການ ຜັນຂະຫຍາຍການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມມີທັດປ່າໄມ້ແບບຍືນຍົງຢູ່ ສປປ ລາວ / ໂຄງການປົກປ້ອງດິນຟ້າອາກາດ ໂດຍການຫຼີກ ລ້ຽງການທຳລາຍປ່າໄມ້ (SU-I-GFLM/CliPAD), ຈັດຕັ້ງປະຕິບັດໂດຍ ອົງການ GIZ.

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

GREEN CLIMATE FUND

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ຮູບພາບໂດຍ © ອົງການ GIZ Laos